**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 21 ກຸມພາ 2009 (02-21-2010)**

---

**ແມ່ນຫຍັງຢູ່ໃນຄວາມຄິດຂອງທ່ານ?:**

**ຂໍ້ພຣະຄັມພີໃນບົດຮຽນ:** (ໂກໂລຊາຍ 3:1-14)

**ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:**

ບົດຮຽນນີ້ແມ່ນກ່ຽວກັບການສຸມຄວາມຄິດຈິດໃຈຢູ່ທີ່ພຣະເຢຊູຄຣິດ, ໃຫ້ເອົາຄວາມຄິດທີ່ບໍ່ດີອອກອອຈາກຊີວິດ ແລະເອົານິສັຍໃຈຄໍທີ່ເຕັມໄປດ້ວຍຄວາມຮັກໃນພຣະເຈົ້າມາແທນທີ່.

**ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:**

ຄົນທົ່ວໄປມັກແບ່ງແຍກຊີວິດອອກເປັນພາກສ່ວນຄື ຝ່າຍວິນຍານຫລືສາສນາ, ແລະການກະທຳທຸກໆຢ່າງປະຈຳວັນແບບມະນຸດທັມມະດາ, ຄົນເຫລົ່ານີ້ໄດ້ຕັ້ງພາກສ່ວນທີ່ຈອມປອມ. ທຸກໆສ່ວນຂອງການກະທຳເຊັ່ນ ນິສັຍໃຈຄໍ ຄວາມນຶກຄິດ ຄວນຈະເອົາໂຮມເຂົ້າກັນເປັນຂອງພຣະເຈົ້າ. ຄວາມເຊື່ອຂອງຄຣິສຕຽນຕ້ອງສະແດງອອກຢູ່ໃນການກະທຳຂອງຊີວິດປະຈຳວັນ ແລະຄວາມສັມພັນເຊິ່ງກັນແລະກັນ.

**ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:**

ບົດຮຽນນີ້ຈະຊ່ອຍໃຫ້ທ່ານຄິດແລະສະແດງຕົວທີ່ກົງກັບຊີວິດໃໝ່ໃນພຣະຄຣິດຂອງທ່ານຢ່າງສມ່ຳສເມີ.

**ການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**ແນະນຳ:**

ຄົນສ່ວນຫລາຍໄດ້ສະແດງຄວາມຄິດຂອງເຂົາເຈົ້າອອກມາຢ່າງໃດ?

ບົດຮຽນນີ້ໄດ້ເນັ້ນໃສ່ໃນການຈົດຈໍ່, ພວເຮົາຈະໄດ້ຮຽນເຣື່ອງການຈົດຈໍ່ຢູ່ທີ່ພຣະຄຣິດໃຫ້ດີຂຶ້ນໂດຍການເອົາຄວາມຄິດຈິດໃຈ ແລະການກະທຳ ນິສັຍໃຈຄໍຝ່າຍພຣະເຈົ້າເຂົ້າມາແທນ.

1. **ຄວາມຄິດແບບໃໝ່:** (ໂກໂລຊາຍ 3:1-4)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂກໂລຊາຍ 3:1-4
- ບັນດາຜູ້ທີ່ເຊື່ອທັງຫລາຍຄວນຈະປ່ຽນແປງແນວທາງຄວາມຄິດແນວໃດແດ່?
- ໃນຈົດໝາຍຂອງທ່ານໂປໂລທີ່ຂຽນເຖິງຄົນໂກໂລຊາຍ, ລາວເນັ້ນໜັກໃສ່ການປ່ຽນແປງເໝືອນກັບພວກນັກປັສຍາທີ່ມີປະສົບການແລ້ວ ໃນເມື່ອພຣະຄຣິດມາເປັນສູນກາງແລ້ວ ຜູ້ທີ່ເຊື່ອທັງຫລາຍຄວນຈະຄິດແລະກະທຳແນວໃດ? ໃຫ້ອະທິບາຍເຖິງການສະແດງອອກໃນຈົດໝາຍຂອງທ່ານໂປໂລທີ່ຂຽນໄປຫາຄົນໂກໂລຊາຍ.
- ທ່ານໂປໂລໄດ້ກ່າວຕັກເຕືອນບັນດາຜູ້ທີ່ເຊື່ອເຫລົ່ານີ້ໃຫ້ຈົດຈໍ່ຢູ່ທີ່ພຣະຄຣິດ ແລະຝຶກຝົນຄວາມຄິດ, ການກະທຳ ແລະລັກສະນະນິສັຍຂອງເຂົາ .

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (ໂກໂລຊາຍ 3:1-4)

1. ການປ່ຽນແປງຂອງທ່ານເຫັນວ່າພຣະເຢຊູໄດ້ມີພລັງແນວໃດແດ່ໃນຊີວິດຂອງທ່ານ?
2. ທ່ານໄດ້ຄິດ ແລະເຕືອນທ່ານເອງຂອງຄວາມແຕກຕ່າງທີ່ພຣະເຢຊູກະທຳໃນຊີວິດຂອງທ່ານເລື້ອຍຢູ່ບໍ່?
3. ເປັນຫຍັງພາກສ່ວນນີ້ຈຶ່ງສຳຄັນຂອງການປ່ຽນແປງ?
4. ອີງຕາມພຣະທັມໂກໂລຊາຍ 3:1-4, ແມ່ນອັນໃດ ທີ່ຈະສະແດງໃຫ້ເຫັນວ່າ ການດຳເນີນຊີວິດຂອງຜູ້ທີ່ເຊື່ອໄດ້ມີຄວາມຄິດການຈົດຈໍ່ຢູ່ທີ່ພຣະຄຣິດ?
5. ແມ່ນຫຍັງທີ່ເປັນສິ່ງທີ່ຕໍ່ສູ້ອັນຍິ່ງໃຫຍ່ໃນການໃຫ້ພຣະຄຣິດເປັນສູນກາງໃນຄວາມຄິດຂອງທ່ານ?
6. ມີຄົນອື່ນເວົ້າວ່າທ່ານໄດ້ເອົາໃຈຈົດຈໍ່ໃສ່ສິ່ງທີ່ຢູ່ເບື້ອງເທິງ ຫລືສິ່ງທີ່ຢູ່ເທິງແຜ່ນດິນຫລາຍໂພດບໍ່?
7. ໃນຫລັກຖານອັນໃດທີ່ເອົາເອົາມາເປັນຂໍ້ອ້າງອີງໃນຄຳຕອບຂອງເຂົາ?

2. **ການປະພຶດແບບໃໝ່:** (ໂກໂລຊາຍ 3:5-11)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂກໂລຊາຍ 3:5-11
- ໃນສາມປໂຍກທີ່ເລີ້ມຕົ້ນດ້ວຍ ຂຸກ ຍູ້ (ຜັກ) (ຂຸກໃຫ້ຕາຍ, ຖິ້ມໄປ, ຍ້າຍອອກໄປ).
- ອີງຕາມປໂຍກເຫລົ່ານີ້, ແມ່ນຫຍັງທີ່ເປັນເປົ້າໝາຍໃນການປ້ອງກັນຄວາມບາບທີ່ທ່ານໂປໂລໄດ້ບອກໄປ
- ເປັນຫຍັງຄົນຈຶ່ງບໍ່ສາມາດອ້ອນວອນໃຫ້ພຣະເຈົ້າປ່ຽນແປງໃນຄົນອື່ນໄດ້ຢ່າງແທ້ຈິງ?
- ໃຫ້ນັກຮຽນອ່ານພຣະທັມໂຣມ 12:2 . ແລ້ວຖາມວ່າ ແມ່ນຫຍັງທີ່ເປັນການຕິດຕໍ່ລະຫວ່າງການເລີ້ມຕົ້ນໃໝ່ຂອງຄວາມຄິດຈິດໃຈຂອງພວກເຮົາ ແລະການປ່ຽນແປງອຸປນິສັຍ ແລະການກະທຳຂອງພວກເຮົາ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (ໂກໂລຊາຍ 3:5-11)

1. ເປັນຫຍັງຈຶ່ງມີຫລາຍລາຍການເຣື່ອງອາຫານການກິນທີ່ປ່ຽນຄຳສັບຈາກ “ລົດຄວາມອ້ວນ” ໃຫ້ເປັນ “ວິທີທາງການດຳເນີນຊີວິດ”? ມັນໄດ້ສະທ້ອນເຖິງສຸຂພາບຮ່າງກາຍ ແລ້ວແມ່ນຫຍັງຈະເກີດຂຶ້ນໃນເມື່ອບາງຄົນໄດ້ຮັບການຊ່ອຍໃຫ້ລອດຊີວິດ?
2. ຄວາມບາບທີ່ບັນທຶກໄວ້ໃນພຣະທັມໂກໂລຊາຍ 3:5-11 “ການກະທຳ” ຄວາມຜິດບາບ ເທົ່ານັ້ນບໍ່?
3. ມັນນຳໄປສູ່ຄວາມບາບ ຫລືເປັນແລ່ງນຳໄປສູ່ຄວາມຕາຍຢ່າງດຽວບໍ່?
4. ເປັນດ້ວຍເຫດໃດການກ່າວຄວາມຕົວະຈຶ່ງນຳບັນຫາຄວາມຜິດບາບມາສູ່ຜູ້ທີ່ເຊື່ອ ແລະໃນໂບດ?

3. **<u>ສາຍສັມພັນແບບໃໝ່:</u>** (ໂກໂລຊາຍ 3:12-14)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂກໂລຊາຍ 3:12-14
- ໃຫ້ນັກຮຽນອະທິບາຍເຣື່ອງເຄື່ອງນຸ່ງທີ່ເຂົາເຈົ້າໃສ່ ເມື່ອເຂົາເຈົ້າຕ້ອງການໃຫ້ພໍດີໃສ່ແລ້ວສະບາຍ.
- ຫລາຍຄົນໃນພວກເຮົາ,ຈຸດເດັ່ນການນຸ່ງຖື ແລະສາຍາທີ່ທ່ານໂປໂລພັລນາ ແລະການໃຫ້ຮູບຮ່າງລັກສະນະນິສັຍຂອງພວກເຮົາເປັນຄືການນຸ່ງເຄື່ອງໃໝ່ ເກີບໃໝ່ ຫລືເໝືອນນັກທຸຣະກິດທີ່ໃສ່ເນັກທາຍ ຫລາຍກວ່າການໃສ່ເພື່ອໃຫ້ມີຄວາມສະດວກສະບາຍ, ຫລາຍສະບາຍກວ່າການໃສ່ຊຸດຍີນ ຫລືເສື້ອຄຸມຍາວ. ໃຫ້ນັກຮຽນສເນີທາງທີ່ບັນດາຜູ້ທີ່ເຊື່ອສາມາດກາຍມາເປັນແບບທັມມະຊາດ ແລະສະດວກສະບາຍຫລາຍຂຶ້ນໃນການເດັ່ນຊັດໃນຄວາມເຊື່ອຂອງຄຣິສຕຽນທຸກໆວັນໃນການກະທຳ ແລະຄວາມສັມພັນ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ໂກໂລຊາຍ 3:12-14

1. ແມ່ນການອອກແບບແນວໃດທີ່ຜູ້ອອກແບບນິຍົມອອກກັນ? ແມ່ນຫຍັງທີ່ເຮັດໃຫ້ສິ່ງເຫລົ່ານີ້ໄດ້ຮັບຄວາມນິຍົມ ແລະມີຄຸນຄ່າຫລາຍກວ່າຍີ່ຫໍ້ອື່ນໆ?
2. ແມ່ນສາຍສັມພັນແນວໃດທີ່ທ່ານມັກຈະເຫັນເລື້ອຍໆ ໃນບັນດາຜູ້ທີ່ເຊື່ອທັງຫລາຍ?
3. ໃນສາມຢ່າງທີ່ທ່ານໂປໂລໃຊ້ພັນລະນາເຖິງຜູ້ທີ່ເຊື່ອທັງຫລາຍໃນຂໍ້ທີ 12 ຊຶ່ງສະທ້ອນເຖິງພວກເຮົານັ້ນແມ່ນຫຍັງແດ່? ເຣື່ອງເປົ້າໝາຍຊີວິດຂອງພວກເຮົາເດ?
4. ລະຫວ່າງຜູ້ທີ່ເຊື່ອສອງຄົນທີ່ຢູ່ໃນໂບດດຽວກັນທີ່ບໍ່ຍອມໃຫ້ອະພັຍກັນເດເຂົາເຈົ້າຈະເປັນຝ່າຍໃດ?
5. ເປັນດ້ວຍເຫດໃດທ່ານໂປໂລຈຶ່ງຕັ້ງໝັ້ນຄົງຢູ່ດ້ວຍການຮັກຕໍ່ທຸກຄົນ ພວກເຮົາຄວນຈະສະແດງໃຫ້ທຸກຄົນໃນສິ່ງທີ່ຢູ່ເບື້ອງເທິງໄດ້ຢ່າງໃດ?

**<u>ພຣະຄັມພີແຫ່ງຄວາມຈິງ</u>**

- ບັນດາຜູ້ທີ່ເຊື່ອທັງຫລາຍໄດ້ເປັນອັນນຶ່ງອັນດຽວກັນກັບພຣະຄຣິດ ໃນການວາຍພຣະຊົນ ແລະການຄືນພຣະຊົນຂອງພຣະອົງ, ການເປັນອັນນຶ່ງອັນດຽວກັນນີ້ ໝາຍຄວາມວ່າ ເຂົາທັງຫລາຍຕ້ອງໃຫ້ຈິດໃຈຄວາມຄິດຂອງເຂົາຈົດຈໍ່ຢູ່ໃນພຣະຄຣິດໃນແຕ່ລະວັນ ຕລອດທັງກິຈການງານທຸກຢ່າງ.
- ບັນດາຜູ້ທີ່ເຊື່ອຕ້ອງປ້ອງກັນພຶດຕິກັມການຕໍ່ສູ້ຊຶ່ງເປັນນິສັຍເກົ່າ ທາງເກົ່າຂອງຊີວິດກ່ອນການກັບໃຈໃໝ່ມາເຊື່ອໃນພຣະຄຣິດ. ຕ້ອງເລີ່ມຕົ້ນໃໝ່ໃນຈິດໃຈໃໝ່ໂດຍຜ່ານທາງການສຶກສາພຣະທັມ ທີ່ສາມາດໄດ້ດຳເນີນຊີວິດໃໝ່ທີ່ພຣະເຈົ້າຊົງສ້າງໃຫ້ມາເປັນອັນນຶ່ງອັນດຽວກັບພຣະຄຣິດແລະຕໍ່ຊຶ່ງກັນ ແລະກັນ.
- ຜູ້ທີ່ເຊື່ອທີ່ດຳເນີນຊີວິດໂດຍການເພິ່ງພາອາສັຍພຣະຄຣິດຈະກາຍມາເປັນຄົນໃໝ່ຢ່າງແທ້ຈິງໃນພຣະຄຣິດ, ຈະສະແດງອອກເຖິງລັກສນະນິສັຍຄວາມໝັ້ນໃຈໃນພຣະເຈົ້າ, ໂດຍສະເພາະຄວາມຮັກ ຄວາມຮັກເປັນສິ່ງຜູກມັດບັນດາຜູ້ທີ່ເຊື່ອເຂົ້າກັນໄວ້ໃນພຣະຄຣິດ.